ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------:::::o0o:::::-----------

ສານປະຊາຊົນສູງສຸດ

ເລກທີ 14 /ສປສສ

ນະຄອນຫຼວງວຽງຈັນ, ວັນທີ 07 ມັງກອນ 2011

# ຄຳແນະນຳເພີ່ມເຕີມ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ບັນດາປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ໃນທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດຄຳແນະນຳ ສະບັບເລກທີ 498/ສປສສ ລົງວັນທີ 20 ທັນວາ 2006 ກ່ຽວກັບການດຳເນີນຄະດີອາຍາ ໂທດປະຫານຊີວິດ.

ອີງຕາມ ມາດຕາ 20 ແລະ 21 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມ ຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ ລົງວັນທີ 17 ກໍລະກົດ 2003 ວ່າດ້ວຍການປະຕິບັດໂທດປະຫານຊີວິດ.

ອີງຕາມ ການຕົກລົງເປັນເອກະພາບ ຂອງກອງປະຊຸມສະພາຜູ້ພິພາກສາ ຄັ້ງວັນທີ 22 ພະຈິກ 2010.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ສະບັບເລກທີ 498/ສປສສ ລົງວັນທີ 20 ທັນວາ 2006 ໂດຍສະເພາະໃນຂໍ້ທີ 3 ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບກັນ ໃນທົ່ວປະເທດ.

ປະທານສານປະຊາຊົນສູງສຸດ ຈຶ່ງອອກຄຳແນະນຳເພີ່ມເຕີມ:

1. ພາຍຫຼັງການ ດຳເນີນຄະດີອາຍາ ທີ່ມີໂທດປະຫານຊີວິດ ໄດ້ສິ້ນສຸດຕາມຂະບວນຍຸຕິທຳ ແລະ ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ສານປະຊາຊົນບ່ອນທີ່ໄດ້ຕັດສິນເປັນຂັ້ນຕົ້ນນັ້ນ ລາຍງານໃຫ້ທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ຢ່າງເປັນລາຍລັກອັກສອນ ແລະ ບໍ່ຈຳເປັນໃຫ້ເພິ່ນມີຄຳເຫັນຕອບອີກ (ໝາຍຄວາມວ່າພຽງແຕ່ລາຍງານໃຫ້ເພິ່ນຮັບຊາບນຳເທົ່ານັ້ນ); ແລ້ວຈຶ່ງສົ່ງສຳນວນຄະດີ ດັ່ງກ່າວໄປຍັງ

ສານປະຊາຊົນສູງສຸດ ເພື່ອສະເໜີໃຫ້ປະທານສານປະຊາຊົນສູງສຸດ ພິຈາລະນາອອກຄຳຊີ້ຂາດເປັນຄັ້ງສຸດທ້າຍ ແລະ ເດັດຂາດ ນອກຈາກນັ້ນ ໃຫ້ປະຕິບັດຕາມຄຳແນະນຳສະບັບເກົ່າ.

2. ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ ໃຫ້ບັນດາຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ວິຊາການ ແລະ ຈ່າສານ ທີ່ຂຶ້ນກັບຕົນຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມ ງວດ.

ຜ່ານການຈັດຕັ້ງປະຕິບັດ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານຄືນ ຫາສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄຳມີ ໄຊຍະວົງ

ບ່ອນສົ່ງ:

- ໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອກວດກາ)
- ກະຊວງຍຸຕິທຳ 1 ສະບັບ (ເພື່ອຊາບ)
- ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ບ່ອນລະ 1 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ບັນດາປະທານສານປະຊາຊົນທ້ອງຖິ່ນທຸກຂັ້ນໃນທົ່ວປະເທດ ບ່ອນລະ 1 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ບັນດາກົມ ແລະ ສະຖາບັນຄົ້ນຄ້ວາ ແລະ ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອຊາບ)
- ສຳເນົາໄວ້ 2 ສະບັບ